# ບົດລາຍງານການເຄື່ອນໄຫວ ຂອງກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມໃນຂົງເຂດຍຸຕິທຳ ແຕ່ປີ 2014 - 2016

ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມໃນຂົງເຂດຍຸຕິທຳ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2017

# ບົດລາຍງານການເຄື່ອນໄຫວ

# ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມໃນຂົງເຂດຍຸຕິທຳ

# ແຕ່ປີ 2014 - 2016



ໂດຍ ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມໃນຂົງເຂດຍຸຕິທຳ

ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ,

ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2017

# ບົດລາຍງານການເຄື່ອນໄຫວ
# ຂອງກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມໃນຂົງເຂດຍຸຕິທຳ
# ແຕ່ປີ 2014 - 2016

## I. ພາກສະເໜີ

### 1. ຄວາມເປັນມາຂອງກຸ່ມ

ໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳ ໃນໄລຍະທີ 1 ເລີ່ມແຕ່ ເດືອນ ກໍລະກົດ 2010 ຫາ ເດືອນ ກໍລະກົດ 2014 ໄດ້ສຳເລັດການສ້າງປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຢູ່ ສປປ ລາວ, ປຶ້ມຖາມ - ຕອບກົດ ໝາຍແພ່ງ, ແຜນວາດການດຳເນີນຄະດີແພ່ງ, ແຜນວາດການດຳເນີນຄະດີອາຍາ ແລະ ອື່ນໆ. ຜົນສຳເລັດດັ່ງກ່າວໄດ້ຖືກນຳໄປເຜີຍແຜ່ໃຫ້ພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດຈຳນວນໜຶ່ງໂດຍກຸ່ມທີ່ຮັບຜິດຊອບຂຽນປຶ້ມຄູ່ມືເຫຼົ່ານັ້ນ. ດັ່ງນັ້ນ, ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມຈຶ່ງແມ່ນ ກຸ່ມ 1 ໃນ 4 ກຸ່ມທີ່ຖືກສ້າງຂຶ້ນໃນໄລຍະທີ 2 ຂອງໂຄງການໃນເດືອນ ສິງຫາ 2014 ຊຶ່ງປະກອບດ້ວຍ 4 ສະຖາບັນການສຶກສາ ຄື: ຄະນະນິຕິສາດ ແລະ ລັດຖະສາດມະຫາວິທະຍາໄລແຫ່ງຊາດ (ຄນລ), ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ (ສຍຊ), ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ສານປະຊາຊົນສູງສຸດ (ສຄຝ ສານ) ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການອົງການໄອຍະການປະຊາຊົນສູງສຸດ (ສຄຝ ໄອຍະການ) ເພື່ອສືບຕໍ່ນຳເອົາຜົນສຳເລັດຂອງໂຄງການໄລຍະທີ 1 ໄປເຜີຍແຜ່ໃຫ້ແກ່ ຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ເຈົ້າໜ້າທີ່ສືບສວນ - ສອບສວນ, ພະນັກງານຂະແໜງຍຸຕິທຳ ແລະ ທະນາຍຄວາມໃນຂອບເຂດທົ່ວປະເທດ ແລະ ປັບປຸງຫຼັກສູດ ການຮຽນ-ການສອນ ໃຫ້ມີຄວາມຕໍ່ເນື່ອງກັນ, ບໍ່ຊໍ້າຊ້ອນກັນ ແລະ ມີຄຸນນະພາບ.

ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມ ມີສະມາຊິກ ທັງໝົດ 19 ທ່ານດັ່ງລຸ່ມນີ້:

- **ມາຈາກ ຄະນະນິຕິສາດ ແລະ ລັດຖະສາດ ມີ ຈຳນວນ 5 ທ່ານ ຄື:**

| | | |
|---|---|---|
| 1 | ທ່ານ ຣສ. ວຽງວິໄລ ທ່ຽງຈັນໄຊ | ຄະນະບໍດີ ຄະນະນິຕິສາດ - ລັດຖະສາດ; |
| 2 | ທ່ານ ຣສ. ບຸນທ່ຽງ ພົມມະຈັນ | ຮອງຄະນະບໍດີ ຄະນະນິຕິສາດ - ລັດຖະສາດ; |
| 3 | ທ່ານ ວິໄຊ ສີຫາປັນຍາ | ຫົວໜ້າພາກວິຊາກົດໝາຍແພ່ງ; |
| 4 | ທ່ານ ນາງ ວິໄລ ລັງກາວົງ | ຫົວໜ້າພາກວິຊາລັດຖະສາດ; |
| 5 | ທ່ານ ນາງ ແກ້ວພິລາ ອານຸວົງ | ຫົວໜ້າໜ່ວຍວິຊາກົດໝາຍແພ່ງ. |

- **ມາຈາກສະຖາບັນຍຸຕິທຳແຫ່ງຊາດ ມີ ຈຳນວນ 4 ທ່ານ ຄື:**

| | | |
|---|---|---|
| 1 | ທ່ານ ປອ. ຈອມຄຳ ບຸບຜາລີວັນ | ຫົວໜ້າສະຖາບັນຍຸຕິທຳແຫ່ງຊາດ; |
| 2 | ທ່ານ ແສງພະຈັນ ວົງໂພທອງ | ຮອງຫົວໜ້າສະຖາບັນຍຸຕິທຳແຫ່ງຊາດ; |
| 3 | ທ່ານ ນາງ ເພັດສະໄໝ ໄຊມຸງຄຸນ | ຫົວໜ້າພະແນກຄຸ້ມຄອງ- ບໍລິຫານ ແລະ ການເງິນ; |
| 4 | ທ່ານ ນາງ ປາດຖະໜາ ບຸນເພັງ | ຫົວໜ້າພາກວິຊາກໍ່ສ້າງວິຊາຊີບຈັດຕັ້ງປະຕິບັດຄຳຕັດສິນຂອງສານ. |

- **ມາຈາກສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ອົງການໄອຍະການປະຊາຊົນສູງສຸດ ມີ ຈຳນວນ 5 ທ່ານ ຄື:**

| | | |
|---|---|---|
| 1 | ທ່ານ ນາງ ພອນເພັດ ອຸ່ນແກ້ວ | ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ; |
| 2 | ທ່ານ ນາງ ບົວຄຳ ປະດັບດີ | ຮອງຫົວໜ້າກົມກວດກາ ອົງການໄອຍະການປະຊາຊົນສູງສຸດ; |
| 3 | ທ່ານ ດາບສະດາຈັນ ວົງໄຊ | ຫົວໜ້າຫ້ອງການ; |
| 4 | ທ່ານ ຄຳອອນ ນາມມຸວົງ | ຫົວໜ້າພະແນກຝຶກອົບຮົມ; |
| 5 | ທ່ານ ນາງ ວຽງສະຫ້ວນ ແສງສຸລິຍາ | ຮັກສາການຫົວໜ້າພະແນກຄົ້ນຄ້ວາຫຼັກສູດ ແລະ ຂໍ້ມູນຂ່າວສານ. |

- **ມາຈາກສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສານປະຊາຊົນສູງສຸດ ມີ ຈຳນວນ 5 ທ່ານ ຄື:**

| | | |
|---|---|---|
| 1 | ທ່ານ ສີສະຫວັນ ຫຼວງລາດ | ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສານປະຊາຊົນສູງສຸດ; |
| 2 | ທ່ານ ບຸນຂວາງ ທະວິສັກ | ຫົວໜ້າຫ້ອງການສານປະຊາຊົນສູງສຸດ; |
| 3 | ທ່ານ ທິບພະສອນ ລາດວົງໄຊ | ຫົວໜ້າພະແນກບໍລິຫານ; |
| 4 | ທ່ານ ສຸລິນທອນ ພິມມະຈັນ | ວິຊາການ; |
| 5 | ທ່ານ ນາງ ດາວອນ ຄຳສີ | ວິຊາການ. |

### 2. ພາລະບົດບາດຂອງກຸ່ມ

ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມມີພາລະບົດບາດດັ່ງນີ້:

1) ຄົ້ນຄວ້າປັບປຸງຫຼັກສູດການຮຽນ - ການສອນຂອງ 4 ສະຖາບັນການສຶກສາ;
2) ຄົ້ນຄວ້າປັບປຸງປຶ້ມຕຳລາການຮຽນ - ການສອນຂອງ 4 ສະຖາບັນການສຶກສາ;
3) ຈັດຕັ້ງການເຜີຍແຜ່ຜົນສຳເລັດຂອງໂຄງການ ໄລຍະທີ 1;
4) ສ້າງເອກະສານສຳນວນຄະດີຈຳລອງແພ່ງ ແລະ ອາຍາ ເພື່ອຮັບໃຊ້ການສິດສອນ - ການຝຶກອົບຮົມຂອງ 4 ສະຖາບັນການສຶກສາ;
5) ຈັດຫ້ອງສອນຕົວຢ່າງ ໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ເພື່ອພັດທະນາການສຶກສາກົດໝາຍ.

## II. ການເຄື່ອນໄຫວຂອງກຸ່ມໃນໄລຍະຜ່ານມາ

### 1. ການຄົ້ນຄວ້າຫຼັກສູດ:

ກ່ອນມີການສ້າງຕັ້ງສະຖາບັນຍຸຕິທຳແຫ່ງຊາດນັ້ນ ມະຫາວິທະຍາໄລແຫ່ງຊາດ, ສະພາທະນາຍຄວາມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສານ ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ເປັນຜູ້ສ້າງນັກກົດໝາຍໃນສາຍວິຊາຊີບຂອງໃຜລາວ.

ພາຍຫຼັງສະຖາບັນຍຸຕິທຳແຫ່ງຊາດໄດ້ຖືກສ້າງຕັ້ງຂຶ້ນ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 101/ນຍ, ລົງວັນທີ 21 ເມສາ 2015 ນັກວິຊາຊີບຍຸຕິທຳຂອງແຕ່ລະສາຂາອາຊີບໄດ້ຮັບການຝຶກອົບຮົມຮ່ວມກັນໃນສະຖານທີ່ແຫ່ງນີ້. ຍ້ອນວ່າເມື່ອກ່ອນແຕ່ລະສະຖາບັນໄດ້ສ້າງນັກວິຊາຊີບຂອງໃຜລາວ ຈຶ່ງເຮັດໃຫ້ການຕີຄວາມໝາຍ ແລະ ການນຳໃຊ້ບາງມາດຕາກົດໝາຍໃນຫຼາຍກໍລະນີ ບໍ່ມີຄວາມເປັນເອກະພາບກັນຈຶ່ງເປັນສາເຫດໜຶ່ງທີ່ພາໃຫ້ການຈັດຕັ້ງປະຕິບັດກົດໝາຍບໍ່ມີຜົນສັກສິດ. ສະນັ້ນເມື່ອມີສະຖາບັນຍຸຕິທຳແຫ່ງຊາດເກີດຂຶ້ນແລ້ວ ຈຶ່ງຈຳເປັນ

ຕ້ອງມີລະບົບການສ້າງນັກວິຊາຊີບຍຸຕິທຳທີ່ລວມສູນ ແລະ ເປັນເອກະພາບກັນ ຊຶ່ງວຽກງານດັ່ງກ່າວນີ້ເປັນວຽກທີ່ໄດ້ຖືກບັນຈຸເຂົ້າໃນແຜນການຂອງໂຄງການ (ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມ).

ໃນຕະຫຼອດໄລຍະຜ່ານມາກຸ່ມໄດ້ດຳເນີນວຽກງານຕາມພາລະບົດບາດຂອງຕົນຢ່າງຕັ້ງໜ້າ, ເປັນຕົ້ນແມ່ນການເຄື່ອນໄຫວວຽກງານພາຍໃນ ແລະ ໄປທັດສະນະສຶກສາຢູ່ປະເທດຍີ່ປຸ່ນ (ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 1.1 ແລະ 1.2 ຂອງບົດລາຍງານສະບັບນີ້) ຈຶ່ງເຮັດໃຫ້ພວກເຮົາຄົ້ນພົບວ່າເນື້ອໃນຂອງລາຍວິຊາທີ່ສິດສອນ ຢູ່ແຕ່ລະສະຖາບັນມີການຊໍ້າຊ້ອນກັນ ຊຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການແບ່ງຂອບເຂດການສິດສອນໃຫ້ເປັນລະບົບ ເພື່ອສ້າງນັກກົດໝາຍທີ່ມີຄຸນນະພາບອອກຮັບໃຊ້ສັງຄົມ.

(ເບິ່ງເອກະສານຊ້ອນທ້າຍ 1 ແລະ 2, ຕາຕະລາງລາຍວິຊາຊໍ້າຊ້ອນກັນຂອງ 4 ສະຖາບັນ ແລະ ຕາຕະລາງເນື້ອໃນຫຍໍ້ຂອງ 3 ວິຊາຕົ້ນຕໍທີ່ໄດ້ມີການປັບປຸງ ແລະ ແບ່ງຂອບເຂດການສິດສອນ).

### 1.1. ການເຄື່ອນໄຫວຢູ່ພາຍໃນ

- ວັນທີ **28 - 30 ກໍລະກົດ 2015** ໄດ້ຈັດກອງປະຊຸມ ຢູ່ທ່າລາດ, ແຂວງວຽງຈັນ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 35 ທ່ານ. ຈຸດປະສົງກອງປະຊຸມແມ່ນ ເພື່ອຄົ້ນຄວ້າກ່ຽວກັບການປັບປຸງຫຼັກສູດການຮຽນ-ການສອນ ແລະ ການຝຶກອົບຮົມຂອງ 4 ສະຖາບັນການສຶກສາ ແນໃສ່ພັດທະນາການສຶກສາທາງດ້ານກົດໝາຍ ແລະ ສ້າງນັກກົດໝາຍຢູ່ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ.



- ວັນທີ **3 - 5 ທັນວາ 2015** ໄດ້ຈັດກອງປະຊຸມກຸ່ມ ຢູ່ທ່າລາດ, ແຂວງວຽງຈັນ ເພື່ອ:
  - ປັບປຸງຫຼັກສູດການຮຽນ - ການສອນ ຂອງ 4 ສະຖາບັນການສຶກສາ ເພື່ອບໍ່ໃຫ້ຊໍ້າຊ້ອນກັນ;
  - ຜ່ານເນື້ອໃນ ແລະ ສາລະບານຕຳລາສອນບາງວິຊາຂອງ 4 ສະຖາບັນການສຶກສາ;.
  - ວາງແຜນການເຄື່ອນໄຫວກິດຈະກຳຂອງກຸ່ມ ແຕ່ເດືອນ ທັນວາ 2015 - ເດືອນ ມີນາ ປີ 2016;

- ຈັດຕັ້ງກຸ່ມສະເພາະກິດຂອງກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມຂຶ້ນໂດຍປະກອບມີຜູ້ຕາງໜ້າຂອງແຕ່ລະພາກສ່ວນ ເພື່ອເຮັດວຽກຮ່ວມກັນກ່ຽວກັບເນື້ອໃນຂອງລາຍວິຊາຊໍ້າຊ້ອນກັນ ຊຶ່ງໃນເບື້ອງຕົ້ນແມ່ນກຳນົດເອົາ 3 ວິຊາ ຄື: ກົດໝາຍອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

➢ ວັນທີ **18 ທັນວາ 2015** ກຸ່ມສະເພາະກິດໄດ້ຈັດກອງປະຊຸມ ເພື່ອຄົ້ນຄວ້າ ແລະ ປຶກສາຫາລືຂອບເຂດລາຍວິຊາທີ່ມີຄວາມຊໍ້າຊ້ອນກັນຂອງ 4 ສະຖາບັນການສຶກສາ.

➢ ວັນທີ **6 ມັງກອນ 2016** ກຸ່ມສະເພາະກິດໄດ້ຈັດກອງປະຊຸມ ຢູ່ທ່າລາດ, ແຂວງວຽງຈັນ ເພື່ອທົບທວນ ແລະ ສັງລວມຄືນເນື້ອໃນຫຍໍ້ຂອງບັນດາລາຍວິຊາທີ່ປຶກສາຫາລືໃນຄັ້ງວັນທີ **18 ທັນວາ 2015** ກ່ອນຈະລາຍງານຜົນຕໍ່ກອງປະຊຸມກຸ່ມໃຫຍ່ໃນວັນທີ **7 - 9 ມັງກອນ 2016**.

➢ ວັນທີ **7 - 9 ມັງກອນ 2016** ໄດ້ຈັດກອງປະຊຸມກຸ່ມໃຫຍ່ ຢູ່ທ່າລາດ, ແຂວງວຽງຈັນ ເພື່ອຟັງການລາຍງານຜົນການຄົ້ນຄວ້າຂອງກຸ່ມສະເພາະກິດ ກ່ຽວກັບເນື້ອໃນຂອງລາຍວິຊາທີ່ຊໍ້າຊ້ອນກັນ ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງຫຼັກສູດການຮຽນ-ການສອນ ໂດຍມີອາຈານທີ່ຮັບຜິດຊອບໃນການສອນວິຊາກົດໝາຍອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງ 4 ສະຖາບັນການສຶກສາເຂົ້າຮ່ວມ ເພື່ອຄວາມເຂົ້າໃຈເປັນເອກະພາບໃນການປັບປຸງລາຍວິຊາທີ່ຊໍ້າຊ້ອນກັນນັ້ນ ແລະ ມອບໝາຍໃຫ້ບັນດາອາຈານເຫຼົ່ານັ້ນໄປສ້າງແຜນການຮຽນ-ການສອນແລ້ວນຳມາຜ່ານກອງປະຊຸມຂອງກຸ່ມໃນວັນທີ 28-29 ມັງກອນ 2016.

➢ ວັນທີ **28 - 29 ມັງກອນ 2016** ໄດ້ຈັດກອງປະຊຸມກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມ ຢູ່ທ່າລາດ, ແຂວງວຽງຈັນ ເພື່ອຜ່ານແຜນການຮຽນ-ການສອນຂອງ 3 ວິຊາທີ່ຊໍ້າຊ້ອນກັນ ໂດຍອາຈານຮັບຜິດຊອບວິຊາເຫຼົ່ານັ້ນເປັນຜູ້ລາຍງານ.



➢ ວັນທີ **24 ກຸມພາ 2016** ໄດ້ຈັດກອງປະຊຸມກຸ່ມທາງໄກຮ່ວມກັບ ອາຈານ ຢູ່ປະເທດ ຢີ່ປຸ່ນ ໂດຍ TV Conference ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 17 ທ່ານ ແລະ ຈຸດປະສົງຂອງກອງປະຊຸມກໍເພື່ອລາຍງານຜົນການເຄື່ອນໄຫວຂອງກຸ່ມໄລຍະ 2-3 ເດືອນຜ່ານມາ ຕໍ່ອາຈານຢູ່ປະເທດຢີ່ປຸ່ນເພື່ອຮັບຊາບ ພ້ອມທັງປຶກສາຫາລືແຜນການເຄື່ອນໄຫວໃນຕໍ່ໜ້າ.

➢ ວັນທີ **9 ມີນາ 2016** ໄດ້ຈັດກອງປະຊຸມກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມຢູ່ໂຮງແຮມລາວພຣາຊາ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 32 ທ່ານ. ຈຸດປະສົງຂອງກອງປະຊຸມກໍເພື່ອແລກປ່ຽນບົດຮຽນກ່ຽວກັບການຮຽນ-ການສອນ ຂອງ 4 ສະຖາບັນການສຶກສາຮ່ວມກັບອາຈານທີ່ມາຈາກປະເທດຢີ່ປຸ່ນ.



**1.2. ການໄປທັດສະນະສຶກສາຢູ່ປະເທດຢີ່ປຸ່ນ:**

➢ ບັນຫາທີ່ນຳໄປແລກປ່ຽນບົດຮຽນ:

ວັນທີ **21 ສິງຫາ - 2 ກັນຍາ 2015** ໄດ້ໄປທັດສະນະສຶກສາ ຢູ່ນະຄອນຫຼວງໂຕກຽວ, ປະເທດຢີ່ປຸ່ນ, ມີສະມາຊິກທັງໝົດຈຳນວນ 17 ທ່ານ ຊຶ່ງຈຸດປະສົງຂອງການໄປທັດສະນະສຶກສາໃນຄັ້ງນີ້ກໍເພື່ອ:

- ຖອດຖອນບົດຮຽນກ່ຽວກັບການສ້າງນັກວິຊາຊີບກົດໝາຍຂອງປະເທດຢີ່ປຸ່ນ;
- ຮຽນຮູ້ປະສົບການ ກ່ຽວກັບການຮຽນ - ການສອນນຳບັນດາອາຈານທີ່ສອນຢູ່ມະຫາວິທະຍາໄລ, ສະຖາບັນກົດໝາຍ (Law School) ແລະ ສະຖາບັນຝຶກອົບຮົມຕຸລາການຂອງປະເທດຢີ່ປຸ່ນເພື່ອເປັນບົດຮຽນທີ່ຈະນຳໃຊ້ເຂົ້າໃນການປັບປຸງການຮຽນ - ການສອນຂອງ 4 ສະຖາບັນການສຶກສາຢູ່ ສປປ ລາວ;
- ສຶກສາແນວທາງໃນການແກ້ໄຂບັນຫາ ແລະ ຂໍ້ຄົງຄ້າງກ່ຽວກັບການສ້າງນັກວິຊາຊີບກົດໝາຍ ຢູ່ ສປປ ລາວ.



**2. ການເຜີຍແຜ່ປຶ້ມຄູ່ມືກົດໝາຍການດຳເນີນຄະດີແພ່ງ ແລະ ການດຳເນີນຄະດີອາຍາ**

ໄດ້ຈັດກອງປະຊຸມເຜີຍແຜ່ປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຢູ່ ສປປ ລາວ 3 ຄັ້ງ ແລະ ກອງປະຊຸມເຜີຍແຜ່ປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ 1 ຄັ້ງ ດັ່ງນີ້:

- **ຄັ້ງທີ 1 :** ຈັດຂຶ້ນໃນວັນທີ **10 - 14 ມີນາ 2015** ຢູ່ແຂວງສະຫວັນນະເຂດ ໂດຍມີນັກສຳມະນາກອນທີ່ມາຈາກ ປກສ ແຂວງ, ປກສ ເມືອງ, ອົງການໄອຍະການປະຊາຊົນພາກ, ແຂວງ, ເຂດ, ສານປະຊາຊົນພາກ, ແຂວງ, ເຂດ, ທະນາຍຄວາມ, ພະແນກຍຸຕິທຳ, ເຈົ້າໜ້າທີ່ປ່າໄມ້ ທີ່ມາຈາກ 3 ແຂວງຄື: ຈຳປາສັກ, ສະຫວັນນະເຂດ ແລະ ຄຳມ່ວນ ເຂົ້າຮ່ວມທັງໝົດ 70 ທ່ານ.

- ວັນທີ **17 ມີນາ 2015** ໄດ້ຈັດກອງປະຊຸມ ຢູ່ຫ້ອງປະຊຸມໂຄງການໄຈກາ (ສີເມືອງ) ເພື່ອຖອດຖອນບົດຮຽນກ່ຽວກັບການຈັດກອງປະຊຸມເຜີຍແຜ່ປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຢູ່ ສປປ ລາວ ທີ່ຜ່ານມາ ຊຶ່ງມີສະມາຊິກກຸ່ມເຂົ້າຮ່ວມທັງໝົດ 15 ທ່ານ.

- **ຄັ້ງທີ 2 :** ຈັດຂຶ້ນໃນວັນທີ **4 - 8 ພຶດສະພາ 2015** ຢູ່ແຂວງສາລະວັນ ໂດຍມີນັກສຳມະນາ ກອນທີ່ມາຈາກ ປກສ ແຂວງ, ປກສ ເມືອງ, ອົງການໄອຍະການປະຊາຊົນ ແຂວງ, ເຂດ, ສານປະຊາຊົນແຂວງ, ເຂດ, ທະນາຍຄວາມ, ພະແນກຍຸຕິທຳ, ເຈົ້າໜ້າທີ່ປ່າໄມ້ ທີ່ມາຈາກ 3 ແຂວງຄື: ສາລະວັນ, ເຊກອງ ແລະ ອັດຕະປື ຊຶ່ງປະກອບດ້ວຍຜູ້ເຂົ້າຮ່ວມທັງໝົດ 65 ທ່ານ.



- **ຄັ້ງທີ 3** : ຈັດຂຶ້ນໃນວັນທີ **8 - 12 ມິຖຸນາ 2015** ຢູ່ ແຂວງອຸດົມໄຊ ໂດຍຈັດເປັນ 2 ຊຸດ ດັ່ງນີ້:
  - ຊຸດທີ 1 : ຈັດຂຶ້ນໃນວັນທີ **8 - 10 ມິຖຸນາ 2015** ໂດຍມີນັກສຳມະນາກອນທີ່ມາຈາກສານແຂວງ, ສານເຂດ, ອົງການໄອຍະການແຂວງ, ອົງການໄອຍະການເຂດ, ປກສ ແຂວງ, ເຈົ້າໜ້າທີ່ປ່າໄມ້ແຂວງ ແລະ ຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຂວງບໍ່ແກ້ວ, ແຂວງຫຼວງນ້ຳທາ ແລະ ແຂວງຜົ້ງສາລີ ພ້ອມດ້ວຍສານ ແລະ ອົງການໄອຍະການພາກແຂວງຫຼວງພະບາງ ຊຶ່ງປະກອບດ້ວຍຜູ້ເຂົ້າຮ່ວມທັງໝົດ 72 ທ່ານ, ຍິງ 12 ທ່ານ.
  - ຊຸດທີ 2 : ຈັດຂຶ້ນໃນວັນທີ **10 - 12 ມິຖຸນາ 2015** ໂດຍມີນັກສຳມະນາກອນທີ່ມາຈາກສານແຂວງ, ສານເຂດ, ອົງການໄອຍະການແຂວງ, ອົງການໄອຍະການເຂດ, ປກສ ແຂວງ, ເຈົ້າໜ້າທີ່ປ່າໄມ້ແຂວງ ແລະ ຫົວໜ້າຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຂວງຫຼວງພະບາງ, ແຂວງໄຊຍະບູລີ ແລະ ແຂວງອຸດົມໄຊ ຊຶ່ງປະກອບດ້ວຍຜູ້ເຂົ້າຮ່ວມທັງໝົດ 76 ທ່ານ, ຍິງ 10 ທ່ານ.



- **ຄັ້ງທີ 4** : ໄດ້ຈັດກອງປະຊຸມເຜີຍແຜ່ປື້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຂຶ້ນໃນວັນທີ **15 - 16 ມີນາ 2016**, ຢູ່ແຂວງຫຼວງພະບາງ ໂດຍມີນັກສຳມະນາກອນທີ່ມາຈາກ ສານແຂວງ, ສານເຂດ, ອົງການໄອຍະການປະຊາຊົນແຂວງ, ອົງການໄອຍະການປະຊາຊົນເຂດ, ພະແນກຍຸຕິທຳ, ທະນາຍຄວາມ, ຕຳຫຼວດເສດຖະກິດ ແຂວງຫຼວງພະບາງ ແລະ ໄຊຍະບູລີ ຊຶ່ງປະກອບດ້ວຍຜູ້ເຂົ້າຮ່ວມ 42 ທ່ານ.



- ວັນ**ທີ 6 ເມສາ 2016** ໄດ້ຈັດກອງປະຊຸມ ຢູ່ຫ້ອງປະຊຸມໂຄງການໄຈກາ (ສີເມືອງ) ເພື່ອຖອດຖອນບົດຮຽນກ່ຽວກັບການຈັດກອງປະຊຸມເຜີຍແຜ່ປື້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຢູ່ແຂວງຫຼວງພະບາງຜ່ານມາ ໂດຍມີສະມາຊິກກຸ່ມເຂົ້າຮ່ວມທັງໝົດ 16 ທ່ານ, ພ້ອມນີ້ກອງປະຊຸມກໍໄດ້ຕົກລົງເຫັນດີທີ່ຈະສະຫຼຸບ, ຖອດຖອນບົດຮຽນ ແລະ ວາງແຜນການເຄື່ອນໄຫວກິດຈະກຳຕໍ່ໄປ ແລະ ກອງປະຊຸມໄດ້ເປັນເອກະພາບກັນວ່າ ຈະຈັດກອງປະຊຸມຢູ່ທ່າລາດ, ແຂວງວຽງຈັນ ໃນວັນທີ 4 - 6 ພຶດສະພາ 2016.
(ເບິ່ງເອກະສານຊ້ອນທ້າຍ 3 ແລະ 4)

## III. ຕີລາຄາຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້

### 1. ຕີລາຄາຜົນໄດ້ຮັບ

#### 1.1. ຕີລາຄາຜົນໄດ້ຮັບໃນວຽກງານຄົ້ນຄວ້າຫຼັກສູດ

ຜ່ານການເຄື່ອນໄຫວໃນໄລຍະຜ່ານມາກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມໄດ້ຄົ້ນຄ້ວາຫຼັກສູດຂອງແຕ່ລະສະຖາບັນ, ໂດຍມີການສົມທຽບລາຍວິຊາສອນທີ່ເຫັນວ່າມີການຊ້ຳຊ້ອນກັນ ໂດຍສະເພາະ 3 ວິຊາເບື້ອງຕົ້ນຄື: ກົດໝາຍອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າ ໃນຂັ້ນຕອນການສຶກສາ ແລະ ການຝຶກອົບຮົມຂອງແຕ່ລະສະຖາບັນ ຄວນສຸມໃສ່ການສິດສອນຕາມຂອບເຂດເນື້ອໃນດັ່ງລຸ່ມນີ້:

- ຄະນະນິຕິສາດ ແລະ ລັດຖະສາດ ແມ່ນສອນທາງດ້ານທິດສະດີກົດໝາຍເປັນຕົ້ນຕໍ ຫຼື ຄວາມຮູ້ພື້ນຖານທາງດ້ານກົດໝາຍ ແລະ ການຄົ້ນຄວ້າວິທະຍາສາດກ່ຽວກັບກົດໝາຍ. ການໃຫ້ຄວາມຮູ້ພື້ນຖານທາງດ້ານກົດໝາຍໃນລະດັບປະລິນຍາຕີແມ່ນໜ້າທີ່ຂອງ ຄນລ ແລະ ການສິດສອນ ຢູ່ ຄນລ ຊຶ່ງຈະເນັ້ນທາງດ້ານທິດສະດີ 80% ແລະມີການປະຕິບັດຕົວຈິງ 20%;

- ສະຖາບັນຍຸຕິທຳແຫ່ງຊາດ ຈະສຸມໃສ່ການຮຽນ - ການສອນ ຊຶ່ງສ່ວນໃຫຍ່ຈະຈັດເປັນຫ້ອງ ສຳມະນາທີ່ນຳໃຊ້ກໍລະນີສຶກສາເພື່ອຝຶກອົບຮົມການປະຕິບັດຕົວຈິງ ດ້ວຍການກຳນົດຂໍ້ເທັດຈິງ ໂດຍອີງ ໃສ່ຫຼັກຖານ ມາສົມທຽບໃສ່ກົດໝາຍເພື່ອຫາຂໍ້ສະຫຼຸບ, ສຳລັບທິດສະດີກົດໝາຍນັ້ນ ໃຫ້ກວມເອົາພຽງແຕ່ 40%, ສ່ວນ 60% ແມ່ນພາກປະຕິບັດຕົວຈິງ ແລະ ກະກຽມສອບເສັງຈົບຫຼັກສູດ;

- ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ຂອງສານປະຊາຊົນສູງສຸດ ແລະ ຂອງອົງການໄອຍະການປະຊາຊົນສູງສຸດ ຈະຝຶກອົບຮົມໃຫ້ພະນັກງານທີ່ເຮັດວຽກຢູ່ສານ ແລະ ອົງການໄອຍະການໃຫ້ເປັນຜູ້ຊ່ຽວຊານສະເພາະດ້ານ ໂດຍເນັ້ນໃສ່ການສ້າງທັກສະ, ເປັນຕົ້ນແມ່ນທັກສະໃນການເກັບໂຮມຫຼັກຖານ, ການເລືອກເຟັ້ນຫຼັກຖານ ໃນການກຳນົດຂໍ້ເທັດຈິງ ມາສົມທຽບໃສ່ກົດໝາຍ. ສຳລັບການຮຽນທິດສະດີກົດໝາຍແມ່ນບໍ່ເກີນ 10% ຂອງຈານວນຊົ່ວໂມງສອນທັງໝົດ.

### 1.1.1. ການເຄື່ອນໄຫວວຽກງານພາຍໃນ

- ຜ່ານການຄົ້ນຄວ້າຂອງກຸ່ມຕະຫຼອດໄລຍະທີ່ຜ່ານມາເຫັນໄດ້ວ່າ ການຮຽນ - ການສອນມີຄວາມຊໍ້າຊ້ອນກັນ ບາງວິຊາ, ເມື່ອມີການປັບປຸງລາຍວິຊາທີ່ມີຄວາມຊໍ້າຊ້ອນກັນແລ້ວ ເຮົາກໍໄດ້ມີການແບ່ງຂອບເຂດການສິດສອນຂອງແຕ່ລະສະຖາບັນໄວ້ຢ່າງຊັດເຈນ, ກຳນົດຂອບເຂດການຮຽນ-ການສອນຂອງແຕ່ລະສະຖາບັນວ່າແຕ່ລະສະຖາບັນຄວນຈະສອນຮອດຂັ້ນໃດ. ຜ່ານມາຍ້ອນວ່າການແບ່ງຂອບເຂດຂອງແຕ່ລະສະຖາບັນຍັງບໍ່ທັນຊັດເຈນຈຶ່ງເຮັດໃຫ້ການແບ່ງຂອບເຂດການສິ່ງຄວາມຮູ້ບໍ່ທັນຈະແຈ້ງ, ເຮັດໃຫ້ຫຼັກສູດຂອງແຕ່ລະສະຖາບັນມີຄວາມຊໍ້າຊ້ອນກັນ

- ຜ່ານການຄົ້ນຄວ້າ ແລະ ການແລກປ່ຽນບົດຮຽນຈາກບັນດາຊ່ຽວຊານ ແລະ ອາຈານຍີ່ປຸ່ນປັດຈຸບັນກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມ ໄດ້ລິເລີ່ມການສ້າງປຶ້ມຄູ່ມືສຳນວນ ຄະດີຈຳລອງແພ່ງ ແລະ ອາຍາ ທີ່ຈະເອົາໄປນຳໃຊ້ໃນການຮຽນ-ການສອນຂອງ 4 ສະຖາບັນການສຶກສາ ໂດຍໄດ້ເອົາຮູບແບບການສິດສອນ ຂອງອາຈານຢູ່ປະເທດຍີ່ປຸ່ນມາຖອດຖອນບົດຮຽນ. ໃນການສິດສອນ ໂດຍສະເພາະການຝຶກອົບຮົມ ຈຸດສຳຄັນ ໃນເວລາມີບົດຝຶກຫັດ (ວຽກບ້ານ) ແມ່ນຕ້ອງຫາຈຸດທີ່ຄືກັນ ແລະ ແຕກຕ່າງກັນໃນເວລາທີ່ນັກຝຶກອົບຮົມຕອບບົດຝຶກຫັດ ແລະ ຕັ້ງຄຳຖາມເຈາະຈີ້ມໄປແຕ່ລະບັນຫາໃຫ້ກັບນັກສຶກສາ ແລະ ນັກຝຶກອົບຮົມ. ສິ່ງສຳຄັນບໍ່ແມ່ນການສະຫຼຸບວ່າຖືກ ຫຼື ຜິດ ແຕ່ແມ່ນການໃຫ້ເຫດຜົນວ່າເປັນຫຍັງຈຶ່ງເປັນຄືແນວນັ້ນ. ໃນການພັດທະນາການຮຽນ-ການສອນ ດ້ວຍການສ້າງປຶ້ມຄູ່ມື ເພື່ອຄົ້ນຄວ້າຫາເຫດຜົນ ຈຶ່ງນຳໄປເຖິງຂໍ້ສະຫຼຸບເປັນບັນຫາສຳຄັນ.

### 1.1.2. ການໄປທັດສະນະສຶກສາຢູ່ປະເທດຍີ່ປຸ່ນ

ໃນປະເທດຍີ່ປຸ່ນ ການສິດສອນ ບໍ່ວ່າຈະເປັນທາງແພ່ງ ຫຼື ທາງອາຍາ ແມ່ນຈະເນັ້ນການສອນໃຫ້ຮຽນຮູ້ວິທີການຄິດ. ແຕ່ສະເພາະໃນ ສປປ ລາວ ສ່ວນໃຫຍ່ ອາຈານຈະເນັ້ນການສອນໃນຮູບແບບຂອງການບັນຍາຍເປັນຕົ້ນຕໍ. ຜ່ານມາໃນ ສ ປ ປ ລາວ ຍັງບໍ່ເຄີຍມີລະບົບຝຶກອົບຮົມຄືຢີ່ປຸ່ນ. ວິທີການຝຶກຂອງສານ ແລະ ອົງການໄອຍະການ ລາວ ແມ່ນສອນໃຫ້ເຮັດຕົວຈິງໂລດ ແຕ່ບໍ່ໄດ້ສອນທັກສະ ແລະ ວິທີຄິດຫຼາຍ ໂດຍສະເພາະການຝຶກງານຂອງນັກຝຶກອົບຮົມວິຊາຊີບ ຜ່ານມາແມ່ນໃຫ້ນັກຝຶກປະຕິບັດຕາມຄຳແນະນຳໂດຍກົງເລີຍ, ບໍ່ໄດ້ຝຶກທັກສະ ແລະ ວິທີຄິດໃຫ້ແກ່ເຂົາເຈົ້າ, ເນັ້ນການປະຕິບັດຕາມຄຳສັ່ງຫຼາຍກວ່າ ໃຫ້ເຂົາໄດ້ຄົ້ນຄິດເອງ.

ຜ່ານການຝຶກອົບຮົມ ແລະ ແລກປ່ຽນບົດຮຽນຂອງປະເທດຍີ່ປຸ່ນເມື່ອປຽບທຽບກັບລາວ ແລ້ວເຫັນວ່າເວລາໃນການຝຶກອົບຮົມຢູ່ລາວຍັງຈຳກັດ ແລະ ລະບົບການຮຽນ-ການສອນ ແລະ ການຝຶກອົບຮົມຍັງບໍ່ທັນສົມບູນ. ໂດຍສັງລວມແລ້ວເສັ້ນທາງການເປັນ ຜູ້ພິພາກສາ ຢູ່ ລາວໃຊ້ເວລາ 11 ຫາ 13 ປີ ຈຶ່ງມີເງື່ອນໄຂເປັນຜູ້ພິພາກສາໄດ້. ຢູ່ຍີ່ປຸ່ນແມ່ນ 7 - 8 ປີ ກໍສາມາດເປັນ ຜູ້ພິພາກສາໄດ້ ຊຶ່ງເຫັນວ່າຈະໃຊ້ເວລາສັ້ນກວ່າລາວ. ບັນຫາສຳຄັນກໍຄືພວກເຮົາຄວນມາສຶກສາເບິ່ງວ່າຈະໃຊ້ເວລາສັ້ນ ຫຼື ຍາວດີ ເພື່ອໃຫ້ໄດ້ນັກຝຶກອົບຮົມທີ່ມີຄຸນນະພາບ. ຕາມການໃຫ້ຂໍ້ສະຫຼຸບຂອງນັກວິຊາການ, ການຈະໃຫ້ໄດ້ຄຸນນະພາບ ແມ່ນ ຕ້ອງໃຫ້ມີ 4 ຢ່າງຄື:

- ມີລະບົບການຄຸ້ມຄອງ - ບໍລິຫານການສຶກສາທີ່ດີ ແລະ ມີຫຼັກສູດດີ;
- ມີບົດສອນດີ ແລະ ອຸປະກອນໃນການຝຶກອົບຮົມດີ;
- ມີຄູຝຶກທີ່ດີ ແລະ ມີຄຸນນະພາບ;
- ມີວິທີການ, ສິ່ງອຳນວຍຄວາມສະດວກໃນການສິດສອນດີ, ເອກະສານປະກອບການສອນດີ.

ຜ່ານມາ ສປປ ລາວ ຍັງຂາດເລື່ອງກໍລະນີຕົວຢ່າງ ແລະ ເນັ້ນໜັກທາງດ້ານຫຼັກການ ແລະ ທິດສະດີ ຫຼາຍກວ່າ, ແຕ່ບົດຮຽນຂອງຢີ່ປຸ່ນ ຈະເນັ້ນທັກສະໃນການໃຫ້ຄົ້ນຄິດ, ສົນທະນາ ຫຼາຍກວ່າການນັ່ງຟັງ ຊຶ່ງເປັນວິທີທີ່ພວກເຮົາເຫັນວ່າຄວນຈະຕ້ອງສຸມໃສ່ການພັດທະນາຫຼັກສູດໃຫ້ມີຄຸນນະພາບ ແລະ ມີຄວາມສອດຄ່ອງຫຼາຍຂຶ້ນ; ໃນນີ້ ການສ້າງຫຼັກສູດ ແລະ ການແຕ່ງເອກະສານສິດສອນ ແມ່ນເຮົາຕ້ອງມີເປົ້າໝາຍເພື່ອເຮັດໃຫ້ນັກສຶກສາຮູ້ວິທີການຄິດ ຊຶ່ງເປັນສິ່ງທີ່ເຮົາຕ້ອງຄຳນຶງເຖິງ.

#### 1.1.3. ສັງລວມຜົນໄດ້ຮັບ

ແຕ່ລະສະຖາບັນທີ່ກ່ຽວຂ້ອງໂດຍສະເພາະ ຄນລ, ສຍຊ, ສຄຝ ສານ ແລະ ສຄຝ ໄອຍະການ ນຳເອົາຜົນຂອງການຄົ້ນຄວ້າ ແລະ ການແບ່ງຂອບເຂດທີ່ເຮົາໄດ້ກຳນົດໃນບົດລາຍງານຂອງກຸ່ມ ນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງເທື່ອລະກ້າວ ຊຶ່ງລາຍລະອຽດມີຄື:

- ສຳລັບ ຄນລ ແມ່ນການຮຽນ - ການສອນໃຫ້ເນັ້ນຄວາມຮູ້ພື້ນຖານກ່ຽວກັບທິດສະດີ, ຫຼັກການຂອງກົດໝາຍເປັນຕົ້ນຕໍ (ເນັ້ນການຖ່າຍທອດຄວາມຮູ້ພື້ນຖານທາງດ້ານກົດໝາຍ);
- ສຍຊ ແມ່ນສອນ ການຕີຄວາມໝາຍຂອງກົດໝາຍ, ການວິເຄາະ ແລະ ການຝຶກທັກສະການປະຕິບັດຕົວຈິງ;
- ສຄຝ ໄອຍະການ ແມ່ນການຖ່າຍທອດຄວາມຮູ້ກ່ຽວກັບພາລະບົດບາດ ແລະ ໜ້າທີ່ຂອງອົງການໄອຍະການເປັນຕົ້ນຕໍ ແລະ ຝຶກຄວາມຊຳນານໃນການດຳເນີນຄະດີ;

- ສ່ວນ ສຄຝ ສານ ແມ່ນຈະເນັ້ນພາກປະຕິບັດຕົວຈິງເປັນຕົ້ນຕໍ ເພື່ອຝຶກຄວາມຊຳນິຊຳນານໃນການດຳເນີນຄະດີຕົວຈິງ.

**ສັງລວມແລ້ວການສົ່ງຄວາມຮູ້ໃນການສ້າງນັກກົດໝາຍຢູ່ລາວຕ້ອງໄປຕາມລະດັບຂັ້ນດັ່ງນີ້:**




ຮູບປິລະມິດສະແດງການແບ່ງຂອບເຂດຂະບວນການສຶກສາກົດໝາຍຂອງ 4 ສະຖາບັນການສຶກສາຄື ຄະນະນິຕິສາດ ແລະ ລັດຖະສາດ, ສະຖາບັນຍຸຕິທຳແຫ່ງຊາດ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສານປະຊາຊົນສູງສຸດ ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ.

ຜ່ານການເຄື່ອນໄຫວຕະຫຼອດໄລຍະ 1 ປີ ຜ່ານມາ ພວກເຮົາສາມາດສັງລວມຜົນໄດ້ຮັບຂອງກຸ່ມດັ່ງນີ້:

- ທາງດ້ານການຄົ້ນຄວ້າຫຼັກສູດ ແມ່ນໄດ້ມີການຕົກລົງຮ່ວມກັນຂອງ 4 ສະຖາບັນການສຶກສາຄື: ຄນລ, ສຍຊ, ສຄຝ ສານ ແລະ ສຄຝ ໄອຍະການ ໃຫ້ມີການປັບປຸງຫຼັກສູດການຮຽນ - ການສອນຂອງແຕ່ລະສະຖາບັນຄືນໃໝ່ ເພື່ອໃຫ້ມີຄວາມຕໍ່ເນື່ອງກັນ, ປັບປຸງເນື້ອໃນລາຍວິຊາທີ່ມີຄວາມຊໍ້າຊ້ອນກັນ. ໃນເບື້ອງຕົ້ນພວກເຮົາສາມາດປັບປຸງໄດ້ສໍາເລັດມີ 3 ວິຊາພື້ນຖານຄື: ກົດໝາຍອາຍາ, ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

- ສຄຝ ສານ ແມ່ນໄດ້ເນັ້ນສອນການຄົ້ນຄວ້າຄະດີແພ່ງ ແລະ ອາຍາ ໂດຍເນັ້ນໃສ່ການຝຶກທັກສະ ແລະ ການປະຕິບັດຕົວຈິງເປັນຕົ້ນຕໍ, ສ່ວນວິຊາກົດໝາຍອາຍາ, ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ແລະ ການດໍາເນີນຄະດີອາຍາ ມອບໃຫ້ເປັນໜ້າທີ່ຂອງ ຄນລ ສອນທິດສະດີພື້ນຖານ ຫຼື ຄວາມຮູ້ເບື້ອງຕົ້ນກ່ຽວກັບການດໍາເນີນຄະດີແພ່ງ ແລະ ການດໍາເນີນຄະດີອາຍາ, ສ່ວນ ສຍຊ ແມ່ນໃຫ້ເນັ້ນທັກສະວິຊາຊີບ, ຫຼັກການ ແລະ ລະບຽບການຂອງກົດໝາຍໂດຍສົມທຽບກັບການຈັດຕັ້ງປະຕິບັດຕົວຈິງ, ມີການເຮັດຈໍາລອງ. ສ່ວນ ສຄຝ ໄອຍະການ ຈະເນັ້ນກ່ຽວກັບການດໍາເນີນຄະດີໂດຍອີງການຂອງຕົນ.

ພາຍໃຕ້ການຮ່ວມມືກັນຂອງ 4 ສະຖາບັນການສຶກສາ ປັດຈຸບັນກໍາລັງຄົ້ນຄວ້າການສ້າງຄູ່ມືສໍານວນຄະດີຈໍາລອງແພ່ງ ແລະ ຄະດີຈໍາລອງອາຍາ[1] ຊຶ່ງຈະເຮັດໃຫ້ສາມາດສ້າງທັກສະທີ່ຈໍາເປັນໃຫ້ແກ່ຜູ້ທີ່ຈະເປັນນັກກົດໝາຍດ້ວຍການທີ່ໄດ້ສໍາຜັດກັບເອກະສານຄູ່ມືການຮຽນການສອນ ທີ່ໃກ້ຄຽງກັບສໍານວນຄະດີຕົວຈິງຫຼາຍຂຶ້ນ.

ສີ່ສະຖາບັນ (ຄະນະນິຕິສາດ - ລັດຖະສາດ, ສະຖາບັນຍຸຕິທໍາແຫ່ງຊາດ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສານປະຊາຊົນສູງສຸດ) ສາມາດນໍາເອົາຄະດີຈໍາລອງອັນດຽວກັນ ໄປສິດສອນໄດ້ຢູ່ ສະຖາບັນຂອງຕົນ ໂດຍຈະມີວິທີການສິດສອນທີ່ແຕກຕ່າງກັນໄປ ເພື່ອໃຫ້ການຮຽນ - ການສອນເປັນລະບົບຕໍ່ເນື່ອງ, ຄົບຊຸດ ແລະ ເປັນໄປຕາມຂັ້ນຕອນຢ່າງຈະແຈ້ງ, ແນໃສ່ຫຼີກລ້ຽງການຮຽນ - ການສອນ ອັນເກົ່າທີ່ເຄີຍໄດ້ຮຽນມາແລ້ວ ແລະ ເຫດຜົນໜຶ່ງຂອງການເຮັດຄະດີຈໍາລອງ ແມ່ນເພື່ອເປັນຄະດີຕົ້ນແບບໃຫ້ຮູ້ກ່ຽວກັບການແບ່ງຂອບເຂດຂອງການສິດສອນສໍາລັບລາຍວິຊາທີ່ຊໍ້າຊ້ອນກັນຂັ້ນເບື້ອງຕົ້ນ ເພາະຍັງມີຫຼາຍວິຊາທີ່ຊໍ້າຊ້ອນກັນ ຊຶ່ງຈະນໍາມາພິຈາລະນາຄົ້ນຄ້ວາ ຕື່ມໃນຕໍ່ໜ້າ.

ຜ່ານການຖອດຖອນບົດຮຽນຈາກປະເທດຍີ່ປຸ່ນເຮົາໄດ້ເອົາບົດຮຽນດັ່ງກ່າວມາປັບໃຊ້ເຂົ້າໃນການປັບຫຼັກສູດຂອງແຕ່ລະສະຖາບັນໃຫ້ເປັນລະບົບຄົບຊຸດ. ຄນລ, ສຍຊ ກໍໄດ້ມີການປັບປຸງຫຼັກສູດຂອງຕົນຄືນໃໝ່ ໂດຍສະເພາະຫຼັກສູດວິຊາຊີບຍຸຕິທໍາ ແມ່ນໄດ້ຫຼຸດເວລາຮຽນພາກທິດສະດີຈາກ 6 ເດືອນ ມາເປັນ 5 ເດືອນ, ເພີ່ມເວລາຝຶກງານຕົວຈິງຈາກ 4 ເດືອນ ເປັນ 6 ເດືອນ ແລະ ຫຼຸດເວລາເຮັດບົດລາຍງານວິຊາການຈາກ 2 ເດືອນ ມາເປັນ 1 ເດືອນ.

ບົດຮຽນຂອງປະເທດຍີ່ປຸ່ນ ຜູ້ທີ່ຈະເປັນນັກວິຊາຊີບຍຸຕິທໍາແມ່ນພາຍຫຼັງຈົບປະລິນຍາຕີແລ້ວຍັງຕ້ອງຜ່ານ Law School ໃຊ້ເວລາ 2 -3 ປີ, ຈະເນັ້ນເຂົ້າຝຶກອົບຮົມຢູ່ສະຖາບັນຝຶກອົບຮົມຕຸລາການອີກ 1 ປີ ລວມທັງໝົດ

[1] ຄູ່ມືສໍານວນຄະດີຈໍາລອງ ແມ່ນການເອົາສໍານວນຄະດີຕົວຈິງ ທີ່ມີຄໍາຕັດສິນ, ຄໍາພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດແລ້ວມາເປັນຕົ້ນແບບໃນການສ້າງເປັນຄູ່ມືສໍານວນຄະດີຈໍາລອງ ໂດຍການດັດແກ້ຂໍ້ມູນບາງສ່ວນ ເພື່ອນໍາມາສ້າງເປັນຄະດີຕົວຢ່າງປະກອບການຮຽນ - ການສອນ.

ໃຊ້ເວລາ 3 ປີ ຊຶ່ງຕ່າງຈາກລະບົບຂອງປະເທດລາວເຮົາໃນປັດຈຸບັນຄື ພາຍຫຼັງຈົບປະລິນຍາຕີ ຫຼື ຊັ້ນສູງກົດໝາຍແລ້ວ ຜູ້ທີ່ຕ້ອງການເປັນຜູ້ພິພາກສາ, ພະນັກງານໄອຍະການ ແລະ ທະນາຍຄວາມຕ້ອງຜ່ານການຝຶກອົບຮົມຢູ່ສະຖາບັນຍຸຕິທຳແຫ່ງຊາດ 1 ປີເທົ່ານັ້ນ ເມື່ອທຽບກັບປະເທດຍີ່ປຸ່ນເຫັນວ່າມີຄວາມແຕກຕ່າງກັນ. ດັ່ງນັ້ນ, ສະຖາບັນຍຸຕິທຳແຫ່ງຊາດຈຶ່ງໄດ້ປັບປຸງຫຼັກສູດໂດຍການຂະຫຍາຍເວລາການຝຶກງານຕົວຈິງໃຫ້ຫຼາຍກວ່າທິດສະດີ ເພື່ອເປັນການຝຶກທັກສະໃຫ້ແກ່ນັກຝຶກອົບຮົມຫຼາຍຂຶ້ນ, ສ່ວນ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ແລະ ສານກໍໄດ້ມີການປັບປຸງຫຼັກສູດ ລາຍວິຊາທີ່ຝຶກຕໍ່ເນື່ອງໃຫ້ສອດຄ່ອງກັນ ແລະ ເປັນລະບົບ ເພື່ອສ້າງນັກກົດໝາຍທີ່ມີຄຸນນພາບມາຮັບໃຊ້ສັງຄົມ.

### 1.2. ຕີລາຄາຜົນໄດ້ຮັບໃນການໄປເຜີຍແຜ່ປຶ້ມຄູ່ມື

ກຸ່ມພັດທະນາການສຶກສາ ແລະ ການຝຶກອົບຮົມສາມາດຈັດຕັ້ງເຜີຍແຜ່ປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງໄດ້ 1 ຄັ້ງຢູ່ແຂວງຫຼວງພະບາງ ແລະ ປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ 3 ຄັ້ງ ຢູ່ແຂວງສະຫວັນນະເຂດ, ສາລະວັນ ແລະ ອຸດົມໄຊ ສຳເລັດຕາມລະດັບຄາດໝາຍ.

ຜ່ານການເຜີຍແຜ່ປຶ້ມຄູ່ມືກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ຮັບການປະເມີນຈາກຜູ້ເຂົ້າຮ່ວມວ່າເປັນປະໂຫຍດຫຼາຍ ແລະ ຮຽກຮ້ອງໃຫ້ມີການຈັດຕັ້ງເຜີຍແຜ່ໃນຂອບເຂດທົ່ວປະເທດໃນຕໍ່ໜ້າ.

## 2. ບົດຮຽນທີ່ຖອດຖອນໄດ້

### 2.1. ວຽກງານຄົ້ນຄວ້າຫຼັກສູດ

- ມີຄວາມເຂົ້າໃຈກ່ຽວກັບລະບົບການກໍ່ສ້າງນັກກົດໝາຍຂອງປະເທດຍີ່ປຸ່ນ ດັ່ງນີ້: ຫຼັງຈາກຈົບປະລິນຍາຕີ ແລ້ວ ຕ້ອງໄປຮຽນຢູ່ Law school 2 ຫຼື 3 ປີ (ຂຶ້ນກັບສາຂາວິຊາທີ່ຮຽນມາ), ເມື່ອຈົບແລ້ວ ຈຶ່ງເສັງເຂົ້າຝຶກອົບຮົມວິຊາຊີບຍຸຕິທຳ 1 ປີ, ຫຼັງຈາກນັ້ນຈຶ່ງໄດ້ສອບເສັງບັນຈຸສັບຊ້ອນເຂົ້າເປັນຜູ້ພິພາກສາ, ໄອຍະການ, ທະນາຍຄວາມ ແລະ ສືບຕໍ່ເຂົ້າຮັບການຝຶກອົບຮົມລະບົບຕໍ່ເນື່ອງ.
- Law school ແມ່ນໄດ້ຮຽນຮູ້ການຕີຄວາມໝາຍເນື້ອໃນຈິດໃຈມາດຕາຂອງກົດໝາຍ, ການຄົ້ນຄວ້າກໍລະນີສຶກສາ ແລະ ຮຽນຮູ້ທັກສະພື້ນຖານໃນການນຳໃຊ້ກົດໝາຍ;
- ສະຖາບັນຝຶກອົບຮົມຕຸລາການ ແມ່ນໄດ້ຮຽນຮູ້ວິທີການທີ່ຖືກຕ້ອງໃນການຕີຄວາມໝາຍມາດຕາກົດໝາຍທີ່ກ່ຽວຂ້ອງເພື່ອໃຫ້ສາມາດໃຊ້ເຂົ້າໃນການປະຕິບັດຕົວຈິງໃນຕໍ່ໜ້າ, ສ່ວນວິທີການສິດສອນນັ້ນຈະໃຫ້ນັກຝຶກອົບຮົມເລືອກເຟັ້ນຫຼັກຖານທີ່ແທດເໝາະຈາກຈຳນວນຫຼັກຖານຕ່າງໆທີ່ມີ ນຳມາກຳນົດຂໍ້ເທັດຈິງຂອງຄະດີແລ້ວສົມທຽບໃສ່ກົດໝາຍເພື່ອໃຫ້ໄດ້ຂໍ້ສະຫຼຸບຂອງກໍລະນີນັ້ນ ຊຶ່ງມີຄວາມແຕກຕ່າງຈາກການສຶກສາຢູ່ Law school ບ່ອນວ່າ Law school ແມ່ນຂັ້ນຕອນທີ່ເຮັດໃຫ້ສາມາດນຳໃຊ້ ເນື້ອໃນຈິດໃຈພື້ນຖານຂອງມາດຕາກົດໝາຍ, ການຕີຄວາມ ໝາຍຂອງມາດຕາກົດໝາຍ, ແນວຄວາມຄິດຂອງມາດຕາກົດໝາຍ ແລະ ກໍແມ່ນຂັ້ນຕອນທີ່ສ້າງໃຫ້ນັກສຶກສາ ສາມາດເອົາຂໍ້ເທັດຈິງທີ່ມີມາໃຫ້ນັ້ນ ສົມທຽບໃສ່ກົດໝາຍ ເພື່ອນຳໄປສູ່ການສະຫຼຸບບັນຫາຂອງຄະດີດັ່ງກ່າວ. ສ່ວນຢູ່ສະຖາບັນຝຶກອົບຮົມຕຸລາການ ແມ່ນຂັ້ນຕອນສ້າງໃຫ້ນັກຝຶກອົບຮົມ ມີທັກສະ, ມີຄວາມ

ສາມາດປະຍຸກໃຊ້ ເນື້ອໃນຈິດໃຈພື້ນຖານຂອງມາດຕາກົດໝາຍ, ການຕີຄວາມ ໝາຍຂອງມາດຕາກົດ ໝາຍ, ແນວຄວາມຄິດຂອງມາດຕາກົດໝາຍ. ກຳນົດຂໍ້ເທັດຈິງໂດຍເລືອກເຟັ້ນຈາກຂໍ້ເທັດຈິງທີ່ຈຳເປັນໂດຍອີງໃສ່ຫຼັກຖານ ແລ້ວເອົາຂໍ້ເທັດຈິງນັ້ນໄປທຽບໃສ່ກົດໝາຍ ເພື່ອນຳໄປສູ່ຂໍ້ສະຫຼຸບຂອງກໍລະນີດັ່ງກ່າວ.

ລະບົບການຝຶກອົບຮົມຍຸຕິທຳຂອງປະເທດຍີ່ປຸ່ນແມ່ນ ຂຶ້ນກັບສານປະຊາຊົນສູງສຸດ, ໃຊ້ເວລາ 1 ປີ ດັ່ງນີ້:

1) ການຝຶກອົບຮົມແນະນຳເບື້ອງຕົ້ນ 2 ເດືອນ;
2) ການລົງຝຶກງານຕົວຈິງ 8 ເດືອນ ຊຶ່ງແບ່ງອອກເປັນ 4 ສາຍຄື:
   - ຢູ່ຄະນະສານແພ່ງ 2 ເດືອນ;
   - ຢູ່ຄະນະສານອາຍາ 2 ເດືອນ;
   - ຢູ່ອົງການໄອຍະການ 2 ເດືອນ;
   - ຢູ່ຫ້ອງການທະນາຍຄວາມ 2 ເດືອນ;
3) ການຝຶກອົບຮົມຮ່ວມກັນ ແລະ ການສອບເສັງສຸດທ້າຍ 2 ເດືອນ.

ໄດ້ບົດຮຽນທີ່ຈະນຳມາປັບໃຊ້ເຂົ້າໃນການປັບປຸງລະບົບການກໍ່ສ້າງນັກກົດໝາຍຢູ່ ສປປ ລາວ ໃຫ້ແທດເໝາະກັບສະພາບຕົວຈິງໃນປັດຈຸບັນ. ໂຄງສ້າງການດຳເນີນຄະດີຂອງລາວ ແລະ ຍີ່ປຸ່ນອາດຈະມີຄວາມແຕກຕ່າງກັນ ແຕ່ກໍສາມາດເອົາບົດຮຽນກ່ຽວກັບວິທີການສິດສອນຂອງຍີ່ປຸ່ນເຂົ້າມາປັບໃຊ້ໃນລາວໄດ້.

ໃນໄລຍະຝຶກອົບຮົມວິຊາຊີບຍຸຕິທຳນັ້ນ ປຶ້ມຕຳລາປະກອບການຮຽນ - ການສອນ ຈະມີການປັບປຸງໄປແຕ່ລະໄລຍະ ແລະ ຕາມຄວາມຈຳເປັນ. ວິທີການສິດສອນແມ່ນ ບໍ່ໄດ້ສອນຕາມປຶ້ມແບບຕາຍຕົວ, ມີການປັບໃຊ້ຕາມສະພາບການຕົວຈິງ, ຄູຝຶກຈະບໍ່ໄດ້ບອກໃຫ້ນັກຝຶກອົບຮົມວ່າຖືກ ຫຼື ຜິດ ແຕ່ສຳຄັນແມ່ນການສ້າງແນວຄວາມຄິດໃຫ້ແກ່ນັກຝຶກອົບຮົມເຂົ້າໃຈໃນການຄົ້ນຄວ້າສຳນວນຄະດີໃຫ້ໄປໃນແນວທາງທີ່ຖືກຕ້ອງ.

- ການຝຶກອົບຮົມຕໍ່ເນື່ອງແມ່ນລົງເລິກສະເພາະ ໃນແຕ່ລະສາຍອາຊີບ ໂດຍໝູນໃຊ້ຄວາມຮູ້ ແລະ ທັກສະທີ່ສະສົມໄດ້ຈາກ ມະຫາວິທະຍາໄລ, ສະຖາບັນກົດໝາຍ Law school ແລະ ສະຖາບັນຝຶກອົບຮົມຕຸລາການ ໃຫ້ມີທັກສະເພື່ອເປັນນັກກົດໝາຍທີ່ມີ ຄວາມຊຳນິຊຳນານສະເພາະດ້ານ.

### 2.2. ການເຜີຍແຜ່ປຶ້ມຄູ່ມື

ການເຜີຍແຜ່ຜົນສຳເລັດກ່ຽວກັບບັນດາປຶ້ມຄູ່ມືທີ່ກຸ່ມຕ່າງໆໄດ້ຂຽນຂຶ້ນມານັ້ນມີຜົນປະໂຫຍດຫຼາຍໃຫ້ແກ່ພະນັກງານຢູ່ສູນກາງ ແລະ ທ້ອງຖິ່ນເພື່ອຮັບຮູ້ ແລະ ເຂົ້າໃຈກົດໝາຍມີຄວາມເປັນເອກະພາບຫຼາຍຂຶ້ນກວ່າເກົ່າ. ສ່ວນການຈັດຕັ້ງປະຕິບັດການເຜີຍແຜ່ຜົນສຳເລັດແມ່ນໃຫ້ບັນດາກຸ່ມທີ່ໄດ້ລົງມືຂຽນບັນດາປຶ້ມຄູ່ມືດັ່ງກ່າວ ເປັນຜູ້ຈັດຕັ້ງການເຜີຍແຜ່ ເນື່ອງຈາກບັນດາກຸ່ມທີ່ຈັດຕັ້ງປະຕິບັດຕົວຈິງຈະເຂົ້າໃຈເລິກເຊິ່ງ ແລະ ກຳໄດ້ເນື້ອໃນຈິດໃຈຂອງບັນດາປຶ້ມຄູ່ມືທີ່ທາງກຸ່ມໄດ້ຂຽນຂຶ້ນ ແລະ ນຳເອົາຜົນການປະເມີນຜ່ານການເຜີຍແຜ່ເພື່ອນຳມາປັບປຸງບັນດາປຶ້ມຄູ່ມືຕ່າງໆ ທີ່ໄດ້ຂຽນສຳເລັດນັ້ນໃນຕໍ່ໜ້າໃຫ້ມີຄວາມສົມບູນກວ່າເກົ່າ.

## IV. ທິດທາງແຜນການໃນຕໍ່ໜ້າ

### 1. ວຽກຈຸດສຸມ

- ສືບຕໍ່ປັບປຸງຫຼັກສູດການຮຽນ - ການສອນ ຂອງ 4 ສະຖາບັນເພື່ອໃຫ້ເປັນລະບົບຕໍ່ເນື່ອງກັນ;
- ສ້າງສຳນວນຄະດີຈຳລອງແພ່ງ ແລະ ອາຍາ ເພື່ອສາມາດນຳໄປສິດສອນໄດ້ທັງ 4 ສະຖາບັນ;
- ຈັດສຳມະນາ ເຜີຍແຜ່ຫຼັກສູດ ແລະ ການແບ່ງຂອບເຂດການຮຽນ-ການສອນ ໃຫ້ບັນດາອາຈານທີ່ສອນຢູ່ 4 ສະຖາບັນ ແລະ ບຸກຄົນພາຍນອກໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດເປັນເອກະພາບກັນ;
- ຈັດຫ້ອງສອນຕົວແບບສຳນວນຄະດີຈຳລອງແພ່ງ ແລະ ຄະດີຈຳລອງອາຍາ ໃຫ້ບັນດາອາຈານ ຢູ່ 4 ສະຖາບັນໃຫ້ຮັບຮູ້ ແລະ ເຂົ້າໃຈຮູບແບບ ແລະ ວິທີການຢ່າງຈະແຈ້ງ ແລະ ເປັນເອກະພາບກັນ.

## 2. ວິທີຈັດຕັ້ງປະຕິບັດ

- ອີງຕາມການແບ່ງຂອບເຂດການຮຽນ-ການສອນຂອງແຕ່ລະສະຖາບັນຂ້າງເທິງນັ້ນ, ພວກເຮົາຕ້ອງໄດ້ສືບຕໍ່ພັດທະນາຫຼັກສູດຂອງແຕ່ລະສະຖາບັນ ແລະ ປັບປຸງລາຍວິຊາອື່ນໆທີ່ຍັງມີການຊໍ້າຊ້ອນໃນແຕ່ລະສະຖາບັນຕໍ່ໄປ ເພື່ອໃຫ້ມີການຮຽນ-ການສອນ ທີ່ເປັນລະບົບຕໍ່ເນື່ອງກັນ;
- ຈັດການສຳມະນາເຜີຍແຜ່ຫຼັກສູດຂອງ 4 ສະຖາບັນການສຶກສາ ໃຫ້ບັນດາອາຈານທີ່ສອນຢູ່ ສະຖາບັນເຫຼົ່ານັ້ນ;
- ພວກເຮົາຈະໄດ້ສ້າງຄູ່ມືສຳນວນຄະດີແພ່ງ ແລະ ສຳນວນອາຍາ ຈຳລອງ ເພື່ອເປັນສ່ວນໜຶ່ງນຳໃຊ້ປະກອບເຂົ້າໃນການຮຽນ - ການສອນ ວິຊາການດຳເນີນຄະດີແພ່ງ ແລະ ການດຳເນີນຄະດີອາຍາຢູ່ແຕ່ລະສະຖາບັນການສຶກສາ ເພື່ອໃຫ້ເຫັນແຈ້ງຂອບເຂດການຮຽນ-ການສອນ ຂອງແຕ່ລະພາກສ່ວນ ລະອຽດກວ່າເກົ່າ;
- ຈັດຕັ້ງການເຜີຍແຜ່ຜົນສຳເລັດຂອງກຸ່ມ ໂດຍການຈັດສຳມະນາການສອນສຳນວນຄະດີແພ່ງ ແລະ ສຳນວນຄະດີອາຍາຈຳລອງ ໃຫ້ບັນດາອາຈານສອນວິຊາທີ່ກ່ຽວຂ້ອງຂອງແຕ່ລະສະຖາບັນເພື່ອໃຫ້ເຂົ້າໃຈເປັນເອກະພາບກັນ.

ການທີ່ພວກເຮົາສາມາດຍາດໄດ້ຜົນສຳເລັດໃນ 1 ປີ ຜ່ານມາ ຄືດັ່ງກ່າວຂ້າງເທິງນີ້ ກໍຍ້ອນມີການປະກອບສ່ວນຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບຂອງພະນັກງານຫຼັກແຫຼ່ງຂອງ 4 ພາກສ່ວນ, ສະມາຊິກຂອງກຸ່ມປະກອບດ້ວຍບັນດາຫົວໜ້າສະຖາບັນການສຶກສາ ແລະ ພະນັກງານວິຊາການທີ່ມາຈາກ 4 ສະຖາບັນ ກໍຄື ຄນລ, ສຍຊ, ສຄຝ ສານ ແລະ ສຄຝ ໄອຍະການ ຊຶ່ງບັນດາທ່ານເຫຼົ່ານັ້ນ ໄດ້ມີບົດບາດ ແລະ ຄວາມຮັບຜິດຊອບໂດຍກົງໃນການປັບປຸງຫຼັກສູດ ແລະ ເປັນສ່ວນໜຶ່ງໃນການອຳນວຍຄວາມສະດວກໃຫ້ແກ່ການປັບປຸງຫຼັກສູດການຮຽນ-ການສອນ ຢູ່ອົງການຕ່າງໆທີ່ກ່ຽວຂ້ອງໄດ້ໂດຍໄວ ແລະ ອີກຢ່າງໜຶ່ງຍ້ອນມີການສະໜອງຂໍ້ມູນທີ່ຈຳເປັນໃຫ້ກັນ ແລະ ກັນ, ມີການເຊີນອາຈານທີ່ໄດ້ສິດສອນຕົວຈິງຢູ່ 4 ສະຖາບັນການສຶກສາເຂົ້າມາມີສ່ວນຮ່ວມ ເພື່ອເຮັດໃຫ້ທາງກຸ່ມສາມາດກຳໄດ້ສະພາບການປະຕິບັດການຮຽນ - ການສອນຕົວຈິງ ແລະ ສາມາດຄົ້ນພົບບັນຫາທີ່ຕ້ອງປັບປຸງແກ້ໄຂໃຫ້ມີປະສິດທິພາບເກີດຂຶ້ນ ໃນອະນາຄົດຕໍ່ໜ້າ ພວກເຮົາກໍຄວນຮັກສາ ແລະ ເສີມຂະຫຍາຍການພົວພັນຮ່ວມມື, ການແລກປ່ຽນຂໍ້ມູນຊຶ່ງກັນ ແລະ ກັນ ແລະ ສືບຕໍ່ແກ້ໄຂບັນຫາຂໍ້ຄົງຄ້າງທີ່ຍັງເຫຼືອໃຫ້ໝົດໄປເທື່ອລະກ້າວ.

## ເອກະສານຊ້ອນທ້າຍ:

1. ຕາຕະລາງປຽບທຽບລາຍວິຊາຊໍ້າຊ້ອນກັນ;
2. ຕາຕະລາງເນື້ອໃນຫຍໍ້ ຂອງ 3 ວິຊາເບື້ອງຕົ້ນ;
3. ຮ່າງໃບປະເມີນຜົນການເຜີຍແຜ່ປື້ມຄູ່ມືການດໍາເນີນຄະດີແພ່ງ
4. ຮ່າງໃບປະເມີນຜົນການເຜີຍແຜ່ປື້ມຄູ່ມືການດໍາເນີນຄະດີອາຍາ
5. ແຜນວາດການແບ່ງຂອບເຂດການສິດສອນຂອງ 4 ສະຖາບັນ.
6. ລາຍຊື່ສະມາຊິກກຸ່ມ
7. ສາລະບານອັກສອນຫຍໍ້

ຕາຕະລາງສົມທຽບຫຼັກສູດຂອງແຕ່ລະສະຖາບັນທີ່ພວມຈັດຕັ້ງປະຕິບັດໃນທ້າຍປີ 2016 (ອຈ ຊູດະ)

| FLP | NIJ | JTRI | OSPP |
|---|---|---|---|
| | **32 ວິຊາ** | **17 ວິຊາ** | **14 ວິຊາ** |
| ການເມືອງ | ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານຍຸຕິທຳ | ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານສານ | ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານໄອຍະການ |
| ຈັນຍາບັນຂອງນັກກົດໝາຍ | ຈັນຍາບັນຂອງວິຊາຊີບຍຸຕິທຳ | ຈັນຍາບັນ-ຈັນຍາທຳຂອງພະນັກງານສານ | ຈັນຍາບັນ-ຈັນຍາທຳຂອງພະນັກງານໄອຍະການ |
| | | | ລະບຽບລັດຖະກອນ |
| ລັດຖະທຳມະນູນ | | ລັດຖະທຳມະນູນ | |
| ພື້ນຖານສິດທິມະນຸດ | | | |
| ທິດສະດີລັດ ແລະ ກົດໝາຍ | | | |
| ລາວສຶກສາ 1 | | | |
| ລາວສຶກສາ 2 | | | |
| | | ຄວາມຮູ້ພື້ນຖານກ່ຽວກັບສາຍພົວພັນທາງແພ່ງ | |
| ພື້ນຖານກົດໝາຍແພ່ງ 1 | | | |
| ພື້ນຖານກົດໝາຍແພ່ງ 2 | | | |
| ກົດໝາຍກຳມະສິດ | | | |
| ກົດໝາຍຂໍ້ຜູກພັນນອກສັນຍາ | | | |
| ກົດໝາຍຂໍ້ຜູກພັນໃນສັນຍາ | | | |
| ກົດໝາຍຄອບຄົວ | | | |
| ກົດໝາຍວ່າດ້ວຍມູນມໍລະດົກ | | | |
| ກົດໝາຍທະບຽນຄອບຄົວ | | | |
| ກົດໝາຍທີ່ດິນ | | | |
| ກົດໝາຍຄ້ຳປະກັນການປະຕິບັດສັນຍາ | | | |
| ກົດໝາຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ | | | |
| ກົດໝາຍດຳເນີນຄະດີແພ່ງ | ການດຳເນີນຄະດີແພ່ງ | ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ | ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ |
| | | | ການດຳເນີນຄະດີແພ່ງ ແລະ ການພິຈາລະນາຄະດີແພ່ງຂອງສານປະຊາຊົນ |
| | | | ການດາເນີນຄະດີແພ່ງຢູ່ສານຂັ້ນຕົ້ນ, ຂັ້ນອຸທອນ, ຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນ |

ຕາຕະລາງສົມທຽບຫຼັກສູດຂອງແຕ່ລະສະຖາບັນທີ່ພວມຈັດຕັ້ງປະຕິບັດໃນທ້າຍປີ 2016 (ອຈ ຊູດະ)

| FLP | NIJ | JTRI | OSPP |
|---|---|---|---|
| | 32 ວິຊາ | 17 ວິຊາ | 14 ວິຊາ |
| ກົດໝາຍລະຫ່ວາງຊາດພາກບຸກຄົນ | | | |
| ພື້ນຖານກົດໝາຍອາຍາ 1 | ການໄຈ້ແຍກອົງປະກອບການກະທຳຜິດທາງອາຍາ ແລະ ການກຳນົດໂທດ | ກົດໝາຍອາຍາ | ກົດໝາຍອາຍາທົ່ວໄປ |
| ພື້ນຖານກົດໝາຍອາຍາ 2 | | | |
| ກົດໝາຍອາຍາພາກສະເພາະ 1,2,3 | | | ກົດໝາຍອາຍາພາກສະເພາະ |
| ກົດໝາຍອາຍາພາກສະເພາະ | | | |
| ກົດໝາຍການດຳເນີນຄະດີອາຍາ | ການດຳເນີນຄະດີອາຍາ | ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ | ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ |
| | | | ການກາເນີນຄະດີອາຍາຂອງອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ |
| | | | ການດາເນີນຄະດີອາຍາຢູ່ສານຂັ້ນຕົ້ນ, ຂັ້ນອຸທອນ, ຂັ້ນລົບລ້າງ ແລະ ຂັ້ນຮື້ຟື້ນຄະດີ |
| ຂະບວນການຍຸຕິທຳເດັກ | ການດຳເນີນຄະດີເດັກ | ກົດໝາຍວ່າດ້ວຍການດຳເນີນຄະດີເດັກ | ກົດໝາຍວ່າດ້ວຍການດຳເນີນຄະດີເດັກ |
| | | | ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ |
| | | ກົດໝາຍວ່າດ້ວຍຄ່າທຳນຽມສານ | |
| | | ກົດໝາຍວ່າດ້ວຍສານປະຊາຊົນ | |
| ວຽກງານຜູ້ພິພາກສາ ແລະ ຈ່າສານ | ວຽກງານຜູ່ພິພາກສາ | | |
| | ເຕັກນິກການປະຊຸມສານຄະດີແພ່ງ | | |
| | ເຕັກນິກການໄກ່ເກັ່ຍ | | |
| | ເຕັກນິກການປະຊຸມສານອາຍາ | | |
| | ເຕັກນິກການຂຽນຄຳຕັດສິນຄະດີອາຍາ | ການຂຽນຄຳຕັດສິນ (ຄະດີແພ່ງ, ອາຍາ ແລະ ເດັກ) | |
| | ເຕັກນິກການຂຽນຄຳຕັດສິນຄະດີແພ່ງ | | |
| ເຕັກນິກການສືບສວນ-ສອບສວນ ແລະ ພິສູດຫຼັກຖານຄະດີອາຍາ | ເຕັກນິກການສືບສວນ-ສອບສວນ ແລະ ການເອົາຄາໃຫ້ການຄະດີອາຍາ | | ເຕັກນິກການສືບສວນ-ສອບສວນຄະດີອາຍາ ຂອງອົງການສືບສວນ-ສອບສວນ |

ຕາຕະລາງສົມທຽບຫຼັກສູດຂອງແຕ່ລະສະຖາບັນທີ່ພວມຈັດຕັ້ງປະຕິບັດໃນທ້າຍປີ 2016 (ອຈ ຊຸດະ)

| FLP | NIJ | JTRI | OSPP |
|---|---|---|---|
| | 32 ວິຊາ | 17 ວິຊາ | 14 ວິຊາ |
| | | | ເຕັກນິກການເອົາຄຳໃຫ້ການ, ການເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີອາຍາ |
| | | ການສະຫຼຸບເຫດການຂອງຄະດີ ແລະ ການກຽມປະເດັ່ນການສອບສວນ | ເຕັກນິກໃນການຄົ້ນຄວ້າ, ການສະຫຼຸບສຳນວນຄະດີ, ການຮ່າງຄຳສັ່ງ,ຄຳຖະແຫຼງ ແລະ ຄຳຕົກລົງຂອງຫົວໜ້າອົງການໄອຍະການປະຊາຊົນກ່ຽວກັບຄະດີອາຍາ |
| | | ການຄົ້ນຄວ້າສຳນວນຄະດີ | |
| | ການຄົ້ນຄວ້າສຳນວນຄະດີແພ່ງ | | |
| | ການຄົ້ນຄ້ວາສຳນວນຄະດີອາຍາ / ໄອຍະການ, ສານ | | |
| | | ການໄຕ່ສວນຄະດີໃນທີ່ປະຊຸມສານ (ຄະດີແພ່ງ, ອາຍາ ແລະ ເດັກ) | |
| | | ການເຮັດບົດສະຫຼຸບລາຍງານຄະດີ | |
| ການບໍລິຫານອົງການໄອຍະການປະຊາຊົນ | ວຽກງານໄອຍະການ | | ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການໄອຍະການ |
| | | | ວຽກງານຫ້ອງການ |
| | | | ເຕັກນິກການຮ່າງເອກະສານທາງລັດຖະການ |
| | ການສັ່ງຟ້ອງຂຶ້ນສານ | | |
| | | | ວິທີການບັນທຶກຄຳໃຫ້ການ |
| | ເຕັກນິກການເອົາຄຳໃຫ້ການຄະດີແພ່ງ | | ເຕັກນິກການເອົາຄຳໃຫ້ການ, ການເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີແພ່ງ |
